**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 20 ກັນຍາ 2009 (09-20-2009)**

---

**<u>ສິ່ງທີ່ຂັດຂວາງຕໍ່ການຮູ້ຈັກກັບພຣະເຢຊູ:</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ມາຣະໂກ 6:1-6, 45-52; 7:8-9,13)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>**

ມາຣະໂກໄດ້ເວົ້າກ່ຽວກັບການເຕີບໂຕຈາກການທ້າທາຍໃນການປະຕິບັດງານຂອງພຣະເຢຊູ; ຄົນຊາວບ້ານເກີດເມືອງນອນຂອງພຣະອົງໄດ້ປະຕິເສດພຣະອົງ, ພວກສາວົກໄດ້ຢຳເກງພຣະອົງ, ແລະທາງການຈັດຕັ້ງສາສນາກໍບໍ່ໝັ້ນໃຈໃນພຣະອົງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ?:</u>**

ຄຣິສຕຽນເຖິງກະສຽນທີ່ຮັບໃຊ້ພຣະເຈົ້າແລ້ວ, ພວກເຂົາເຈົ້າກໍປະເຊີນກັບການຂັດຂວາງຫລາຍຢ່າງ ເໝືອນດັ່ງທີ່ພຣະເຢຊູໄດ້ຖືກປະຕິເສດຈາກຊາວບ້ານເກີດເມືອງນອນຂອງພຣະອົງ. ຄຣິສຕຽນກໍອາດປະເຊີນກັບການປະຕິເສດຈາກຄອບຄົວ, ໝູ່ເພື່ອນ, ຄົນຂ້າງບ້ານ, ແລະສະຖານທີ່ທຳງານ. ເຂົາເຈົ້າອາດປະສົບການກັບຄວາມຢ້ານກົວທີ່ຄ້າຍຄືກັນກັບປະສົບການຂອງພວກສາວົກຂອງພຣະເຢຊູ. ຄຣິສຕຽນທັງຫລາຍໄດ້ເອົາພຣະຄັມພີມາປະກອບໃຊ້ໃນຊີວິດແລ້ວ, ເຂົາເຈົ້າກໍຈະພົບສິ່ງທ້າທາຍບາງປະການທີ່ເຄີຍມີມາແລ້ວໃນຮີດຄອງຂອງສາສນາ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>**

ບົດຮຽນນີ້ ຈະຊ່ອຍທ່ານໃຫ້ໄດ້ຊັຍຊະນະກັບສິ່ງທີ່ທ້າທາຍທີ່ບໍ່ສາມາດຫລີກເວັ້ນໄດ້ຕໍ່ການຕິດຕາມພຣະເຢຊູ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ບົດຮຽນນີ້ນີ້ຈະເປັນສິ່ງທີ່ຝຶກຝົນ ທົດສອບຈິດວິນຍານ ຂອງພວກເຮົາເພື່ອໃຫ້ຄົ້ນພົບໃນການເອົາຊະນະສິ່ງທີ່ຂັດຂວາງພວກເຮົາຈາກການຮູ້ຈັກກັບພຣະເຢຊູ.
- ໃຫ້ນັກຮຽນຈົດສິ່ງທີ່ຂັດຂວາງໃນການຮູ້ຈັກກັບພຣະເຢຊູ ເຊັ່ນ: (ຢ້ານກົວ, ປະຕິເສດ, ຮີດຄອງປະເພນີ, ແລະອື່ນໆ...)

- ໃຫ້ແນະນຳສິ່ງທີ່ຈະຮຽນໃນມື້ນີ້ສັ້ນໆ, ໃຫ້ເນັ້ນໜັກວ່າ ເຮັດແນວໃດບັນດາຜູ້ທີ່ເຊື່ອທັງຫລາຍຈະຕໍ່ສູ້ກັບສິ່ງທີ່ຂັດຂວາງ ຫລືສິ່ງທີ່ທ້າທາຍທັງຫລາຍເໝືອນດັ່ງພຣະເຢຊູໄດ້ພົບ-ຕລອດທັງຢູ່ໃນເມືອງຂອງພຣະອົງເອງ.

1. **<u>ປະເຊີນໜ້າກັບການປະຕິເສດ</u>**: (ມາຣະໂກ 6:1-6)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ມາຣະໂກ 6:1-6 ແລະໃຫ້ນັກຮຽນຂີດກ້ອງ ຫລືຂີດວົງອ້ອມຄຳທີ່ເປັນການບັນລະຍາຍຕໍ່ການຕອບສນອງຂອງຜູ້ທີ່ໄດ້ຍິນການສັ່ງສອນຂອງພຣະເຢຊູ.
- ຖາມນັກຮຽນວ່າ: ທ່ານເຄີຍມີຄົນໃນຄອບຄົວຂອງທ່ານປະຕິເສດ ຫລືຂັດຂວາງໃນການຮູ້ຈັກພຣະເຢຊູຂອງທ່ານບໍ່? ຖ້າມີຂໍໃຫ້ຍົກຕົວຢ່າງມາເບິ່ງເພື່ອຈະໄດ້ໜູນໃຈຊຶ່ງກັນແລະກັນ.
- ຂໍໃຫ້ຜູ້ນຶ່ງອ່ານຂໍ້ທີ 3 ແລ້ວມາສົນທະນາກັນເຣື່ອງຄອບຄົວຂອງພຣະເຢຊູວ່າເຂົາເຈົ້າມີທ່າທີແນວໃດຕໍ່ພຣະອົງແລະພຣະອົງຕອບສນອງເຂົາແນວໃດ? ( ອ່ານຂໍ້ 4-6)

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ</u>**: (ມາຣະໂກ 6:1-6)

1. ຕັ້ງແຕ່ພຣະເຢຊູໄດ້ຊົງປະເຊີນໜ້າກັບພວກປະຕິເສດດ້ວຍຕົວຂອງພຣະອົງເອງ, ໃນຄວາມຄິດຂອງທ່ານຄິດວ່າເປັນຫຍັງບັນດາຜູ້ທີ່ເຊື່ອຈຶ່ງມີຄວາມປລາດໃຈໃນເວລາທີ່ມີຄົນປະຕິເສດໃນການແບ່ງປັນ (ບອກເຣື່ອງ)ພຣະເຢຊູໃຫ້ເຂົາຟັງ?
2. ທ່ານເຫັນພ້ອມວ່າ ຄົນອາດປົກປິດຄວາມຕ້ອງການຂອງເຂົາເອງ ສຳລັບພຣະຄຣິດໂດຍການປະຕິເສດພຣະອົງມາແຕ່ເບື້ອງຕົ້ນແລ້ວ?
3. ທ່ານຄິດວ່າແນວໃດກ່ຽວກັບຄົນທີ່ສຳຣວດເບິ່ງການແນະນຳຕົວຂອງຜູ້ທີ່ເຊື່ອທັງຫລາຍໃນສມັຍນີ້?

2. **<u>ເອົາຊະນະຄວາມຢ້ານກົວ</u>**: (ມາຣະໂກ 6:45-52)

- ສເນີໃຫ້ນັກຮຽນຜູ້ນຶ່ງອ່ານພຣະທັມ ມາຣະໂກ 6:45-52
- ພຣະເຢຊູ ແລະອັຄສາວົກຂອງພຣະອົງໄດ້ປະເຊີນໜ້າກັບການປະຕິເສດ ແລະຄວາມຢ້ານກົວມາແລ້ວ.
- ໃຫ້ຜູ້ນຶ່ງອາສາສມັກເລົ່າເຣື່ອງປະສົບການຂອງຕົນກັບຄວາມຢ້ານກົວໃນຂນະທີ່ຮັບໃຊ້ພຣະເຈົ້າຢູ່ສູ່ຄົນໃນໃນຫ້ອງຮຽນຟັງ.
- ແນະນຳໃຫ້ນັກຮຽນຕອບສນອງຕໍ່ເຫດການທີ່ເກີດຂຶ້ນໃນຂໍ້ທີ 47-48, ຖ້າແມ່ນທ່ານຢູ່ໃນເຫດການນັ້ນທ່ານຈະເຮັດຢ່າງໃດ ແລະຈະມີຄວາມຮູ້ສຶກແນວໃດ?
- ເພື່ອໃຫ້ຊັດເຈນ " ໃຫ້ຜ່ານທາງນັກຮຽ" ພວກເຮົາໄດ້ຮູ້ຈັກວ່າພຣະເຢຊູແມ່ນພຣະເມສານ້ອຍ, ແຕ່ພວກອັຄສາວົກບໍ່ໄດ້ເຂົ້າໃຈຢ່າງຄັກແນ່ວ່າແມ່ນຫຍັງທີ່ເປັນຄວາມໝາຍແທ້ຈິງ.
- ໃຫ້ນັກຮຽນຜູ້ນຶ່ງອາສາສມັກແບ່ງປັນບາງສິ່ງທີ່ລາວຢ້ານ. ເໝືອນນດັ່ງບາງຄົນຈະອ້າງເຖິງການຢ້ານຊຶ່ງອາດເປັນເຣື່ອງຕລົກກໍໄດ້ ແຕ່ໃຫ້ເປັນເຣື່ອງຢ້ານ.
- ຈາກເຣື່ອງທີ່ໄດ້ຍິນຜ່ານມາ, ໃຫ້ອອກຄວາມຄິດຄວາມເຫັນເຖິງສິ່ງທີ່ເປັນຄຳຖາມ ຫລືການສະແດງກໍໄດ້ ເພື່ອສ້າງບັນຍາກາດສນຸກສນານໃນຫ້ອງຮຽນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ</u>**: ມາຣະໂກ 6:45-52

1. ໃນເມື່ອທ່ານມີຄວາມຢ້ານກົວ ພຣະເຈົ້າເຈົ້າໄດ້ຊົງຊ່ອຍທ່ານແນວໃດ?
2. ພຣະເຈົ້າໄດ້ຊົງໃຊ້ທ່ານໃຫ້ໄປຊ່ອຍຜູ້ທີ່ມີຄວາມຢ້ານກົວແນວໃດແດ່?

3. ທ່ານຄິດວ່າພຣະເຢຊູຈະເອົາຄວາມຢ້ານກົວທັງໝົດທີ່ປະສົບນັ້ນອອກຈາກຊີວິດຂອງທ່ານບໍ່? ເພາະເຫດໃດຈຶ່ງເອົາອອກ ຫລືເປັນເພາະເຫດໃດຈຶ່ງບໍ່ເອົາອອກ?

## 3 . <u>*ປະເຊີນກັບພວກຖືຮີດຄອງປະເພນີ:*</u> (ມາຣະໂກ 7:8-9,13)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ມາຣະໂກ 7:8-9,13
- ແບ່ງປັນເຣື່ອງຕໍ່ໄປນີ້ໃຫ້ກັບນັກຮຽນ:

ຫລາຍປີຜ່ານມາຂ້າພະເຈົ້າໄດ້ຍິນເຣື່ອງນຶ່ງທີ່ເລົ່າວ່າ ມີຄອບຄົວນຶ່ງໄດ້ເຕົ້າໂຮມກັນເພື່ອກິນເຂົ້າແລງໃນວັນຄືນພຣະຊົນ(ອີສເຕີ) ລູກລາວຜູ້ຫາກໍແຕ່ງງານໃໝ່ເປັນຜູ້ຄົວກິນ ກ່ອນທີ່ລາວຈະເອົາແຮມຫກ້ອນໃຫຍ່ເຂົ້າເຕົາອົບ ແມ່ຂອງລາວໄດ້ຢຸດລາວໄວ້ແລ້ວບອກລາວວ່າ, "ເຈົ້າຕ້ອງຕັດແຮມນັ້ນເປັນສາມຕ່ອນກ່ອນເອົາເຂົ້າເຕົາອົບ" ຜູ້ເປັນລູກສາວຖາມວ່າ "ເປັນຫຍັງຈຶ່ງຕ້ອງຕັດເປັນສາມຕ່ອນ.?" ຜູ້ເປັນແມ່ຕອບວ່າ "ແມ່ຂອງຂ້ອຍ(ແມ່ຕູ້)ສອນໃຫ້ຂ້ອຍເຮັດແນວນັ້ນ. " ລູກສາວເລີຍໄປຖາມແມ່ຕູ້ທີ່ຢູ່ໃນຫ້ອງຮັບແຂກ ຖາມວ່າ, "ແມ່ຕູ້ ອີ່ແມ່ບອກໃຫ້ຂ້ານ້ອຍຕັດແຮມເປັນສາມຕ່ອນກ່ອນເອົາເຂົ້າເຕົາອົບ, ເປັນຫຍັງຈຶ່ງຕ້ອງເຮັດແນວນັ້ນ?" ແມ່ຕູ້ໄດ້ຕອບຫຼານສາວວ່າ, "ແມ່ຂອງແມ່ຕູ້ສອນໃຫ້ແມ່ຕູ້ເຮັດແນວນັ້ນ ແລະພວກເຮົາກໍເຮັດສືບຕໍ່ກັນມາ." ຜູ້ເປັນພໍ່ວຂອງລູກ(ຫຼານ)ສາວຊຶ່ງຢູ່ອີກຫ້ອງໄດ້ຍິນການສົນທະນາຂອງເຂົາເຈົ້າ ຈຶ່ງຍ່າງໄປຫາເພື່ອຈະແກ້ບັນຫານັ້ນ ລາວໄດ້ເວົ້າຂຶ້ນຖ້າມກາງເຂົາເຈົ້າວ່າ, "ເທື່ອນຶ່ງໃນວັນອີສເຕີ ຂ້ອຍໄດ້ຊຸກແຮມກ້ອນໃຫຍ່ ແຕ່ເຮືອນຂ້ອຍມີເຕົາອົບນ້ອຍ ຈຶ່ງຈຳເປັນຕ້ອງຕັດແຮມອອກເປັນສາມຕ່ອນຈຶ່ງເອົາໃສ່ເຕົາອົບໄດ້."

### <u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> ມາຣະໂກ 7:8-9,13

1. ຂນົບທຳນຽມປະເພນີອັນໃດແດ່ທີ່ໂບດຂອງທ່ານບໍ່ກ່ຽວຂ້ອງ, ແຕ່ເຖິງປານນັ້ນເຂົາກໍຍັງມີສືບຕໍ່ໄປເລື້ອຍໆ?
2. ເຮັດແນວໃດຜູ້ທີ່ເຊື່ອທັງຫລາຍຈຶ່ງຈະດຶງດູດຄວາມສົນໃຈເຂົາເຈົ້າໄດ້ຖ້າຫາກບໍ່ມີຄວາມໝັ້ນໃຈແລະເປັນແບບຢ່າງໃຫ້ແກ່ທຸກໆປະເພນີ?
3. ນຶ່ງໃນ 2-3 ຄຳຖາມນີ້ອາດຂໍໃຫ້ຊ່ອຍໂບດເລີ້ມຕົ້ນການທ້າທາຍກັບຂນົບທຳນຽມຮີດຄອງປະເພນີທັງຫລາຍທີ່ຝ່າຝືນຂັດກັບພຣະຄຳຂອງພຣະເຈົ້ານັ້ນແມ່ນອັນໃດ?
4. ຄົນເຖົ້າຄົນແກ່ທຸກຄົນທີ່ຕິດພັນຢູ່ໃນຮີດຄອງປະເພນີ ແລະຄົນໜຸ່ມທັງຫລາຍຕໍ່ສູ້ກັບຮີດຄອງປະເພນີບໍ່? ເປັນເພາະເຫດໃດຈຶ່ງຕໍ່ສູ້ ຫລື ເປັນເພາະເຫດໃດຈຶ່ງບໍ່?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ຜູ້ທີ່ຕິດຕາມພຣະເຢຊູສາມາດທີ່ຈະເຊື່ອໄດ້ວ່າຈະມີການທ້າທາຍໃນການດຳເນີນຊີວິດຂອງເຂົາເຈົ້າ.
- ບາງເທື່ອຜູ້ທີ່ຕິດຕາມພຣະຄຣິດໄດ້ມີປະສົບການກັບການປະຕິເສດມາແລ້ວ.
- ຄວາມຢ້ານກົວໄດ້ເປັນອຸປສັກໃຫຍ່ຂັດຂວາງໃນເວລາພວກເຮົາພຍາຍາມເຊື່ອໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າ.
- ຄ່ານິຍົມຂອງຮີດຄອງປະເພນີນັ້ນຂັດກັບພຣະທັມ ຈຶ່ງຈຳເປັນທີ່ເຮົາຈະຕ້ອງປະເຊີນ.